ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ
ຄະນະບໍລິຫານງານຊາວໜຸ່ມ

ເລກທີ 944/ຄຊໜ
ບໍລິຄໍາໄຊ, ວັນທີ 16 ທັນວາ 2022

# ແຈ້ງການ

**ເຖິງ : ສະມາຄົມນັກທຸລະກິດໜຸ່ມແຂວງ, ຄະນະບໍລິຫານງານຊາວໜຸ່ມເມືອງ, ຮາກຖານ, ໜ່ວຍຮາກຖານອ້ອມຂ້າງແຂວງ, ບໍລິສັດ, ຫ້າງຮ້ານຕ່າງໆ ແລະ ຊາວໜຸ່ມ ພາຍໃນແຂວງ ທີ່ນັບຖື.**

**ເລື່ອງ: ຄັດເລືອກຊາວໜຸ່ມຍິງພາຍໃນແຂວງ ເຂົ້າຮ່ວມງານປະກວດນາງສາວທ່ອງທ່ຽວລາວ.**

- ອີງຕາມ ແຈ້ງການຂອງຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 1155/ຫກ, ລົງວັນທີ 14 ທັນວາ 2022 ກ່ຽວກັບການຄັດເລືອກຊາວໜຸ່ມຍິງບັນດາແຂວງ ເຂົ້າຮ່ວມງານປະກວດນາງສາວທ່ອງທ່ຽວລາວ;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບ ພາຍໃນຄະນະບໍລິຫານງານຊາວໜຸ່ມແຂວງ ລົງວັນທີ 15 ທັນວາ 2022.

**ຄະນະບໍລິຫານງານຊາວໜຸ່ມແຂວງ** ຂໍຖືເປັນກຽດຢ່າງສູງແຈ້ງມາຍັງ ສະມາຄົມນັກທຸລະກິດໜຸ່ມແຂວງ, ຄະນະບໍລິຫານງານຊາວໜຸ່ມຮາກຖານ, ໜ່ວຍຮາກຖານ ອ້ອມຂ້າງແຂວງ, ບໍລິສັດ, ຫ້າງຮ້ານຕ່າງໆ ແລະ ຊາວໜຸ່ມ ພາຍໃນແຂວງ ຊາບວ່າ: ໂດຍປະຕິບັດຕາມບົດບັນທຶກຮ່ວມມືລະຫວ່າງ ກົມຂະບວນການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ກຸ່ມບໍລິສັດ ດອກງິ້ວຄໍາ ຈໍາກັດ ໃນການຈັດຕັ້ງປະຕິບັດການປະກວດນາງສາວທ່ອງທ່ຽວລາວ ປະຈໍາປີ 2023 ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ມີຄວາມສະດວກໃນການໂຄສະນາໃຫ້ແມ່ຍິງໜຸ່ມໃນທົ່ວແຂວງ ຜູ້ທີ່ມີພອນສະຫວັນ, ມີຄວາມຮູ້, ຄວາມສາມາດ ໄດ້ມີສ່ວນຮ່ວມຢ່າງເປັນຂະບວນກວ້າງຂວາງ. ເຊິ່ງມາດຖານ ແລະ ເງື່ອນ ໄຂຂອງຜູ້ສະໝັກ ມີດັ່ງນີ້:

1. ໂສດ ແລະ ບໍ່ເຄີຍແຕ່ງງານມາກ່ອນ;
2. ບໍ່ເຄີຍມີລູກມາກ່ອນ;
3. ມີອາຍຸ 17 - 25 ປີ;
4. ມີຄວາມສູງບໍ່ຕໍ່າກວ່າ 160 ຊມ ຂຶ້ນໄປ;
5. ເປັນຜູ້ຍິງໂດຍກໍາເນີດ;
6. ມີຄວາມຮູ້ກ່ຽວກັບ: ວັດທະນະທໍາ, ການເມືອງ, ການຄ້າ ແລະ ອື່ນໆ;
7. ເປັນບຸກຄົນທີ່ມີປະຫວັດດີ ເຊັ່ນ:
   - ບໍ່ເຄີຍມີຄະດີຕິດໂທມາກ່ອນ;
   - ບໍ່ເຄີຍຖ່າຍຮູບ ຫຼື ວິດີໂອ ລາໜົກອານາຈານ ທຸກງສື່ພິມ ຫຼື ທາງ Social media.

- ➢ ເລີ່ມຮັບສະໝັກ ແຕ່ວັນທີ 1 – 30 ທັນວາ 2022;
- ➢ ຮອບຄັດເລືອກເອົາ 20 ນ້ອງນາງສາວ ແມ່ນວັນທີ 5 ມັງກອນ 2023;

- ຮອບຕັດສິນ ແມ່ນວັນທີ 29 ມັງກອນ 2023.

⇨ ສໍາລັບງົບປະມານຮັບໃຊ້ໄລຍະສະໝັກ ຫຼື ຄັດເລືອກ ຂອງຜູ້ເຂົ້າຮ່ວມ ແມ່ນກຸ່ມຄົນເອງ; ສ່ວນຜູ້ເຂົ້າຮອບ 20 ຄົນ *ສຸດທ້າຍ ບໍລິສັດຈະຮັບຜິດຊອບ.*

⇨ ສໍາລັບແບບຟອມສະໝັກ ແມ່ນໄດ້ຄັດຕິດພ້ອມນີ້ ຫຼື ສາມາດໂທພົວພັນປະສານງານ ສະຫາຍ ນາງ ວັນເພັງ ປັນຍາທອງ 020 28518512, 54541505.

ດັ່ງນັ້ນ; ຈຶ່ງແຈ້ງມາຍັງບັນດາສະຫາຍ ເພື່ອຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

**ເລຂາຄະນະບໍລິຫານງານຊາວໜຸ່ມ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ
ຄະນະບໍລິຫານງານ ຊປປລ ແຂວງບໍລິຄໍາໄຊ

ທອງມະນີ ໂຄດປັນຍາ